# ໂປຣແກຣມບໍລິຫານຈັດການ ການນຳໃຊ້ອຸປະກອນສະມາດໂຟນ Mobile Fence

## 1. ໂປຣແກຣມ Mobile Fence

Mobile Fence ເປັນໂປຣແກຣມຫນຶ່ງທີ່ເຮັດວຽກໃນລະບົບປະຕິບັດການ Android ແລະ ໃຊ້ສຳລັບ ບໍລິຫານຈັດການ ການນຳໃຊ້ອຸປະກອນສະມາດໂຟນ ຊຶ່ງມີຄຸນສົມບັດຫລາຍຢ່າງເຊັ່ນ: ສາມາດຕິດຕາມ, ປ້ອງກັນການເຂົ້າເວັບໄຊອັນຕະລາຍ, ກຳນົດເວລາການຫລິ້ນໂທລະສັບສະມາດໂຟນ ແລະ ອື່ນໆ ເພື່ອຊ່ວຍໃຫ້ການນຳໃຊ້ອຸປະກອນສະມາດໂຟນ ມີຄວາມປອດໄພຫລາຍຂຶ້ນ.

## 2. ຄຸນສົມບັດຂອງໂປຣແກຣມ Mobile Fence

### 2.1 App Blocking

ຜູ້ປົກຄອງສາມາດເບິ່ງບັນຊີລາຍຊື່ຂອງໂປຣແກຣມທີ່ຕິດຕັ້ງໃນອຸປະກອນສະມາດໂຟນຂອງເດັກ ແລະ ສາມາດເລືອກປິດໂປຣແກຣມທີ່ບໍ່ຕ້ອງການ ຫຼື ຈຳກັດການໃຊ້ຕາມເວລາທີ່ເຮົາກຳນົດໄວ້.




### 2.2 Website Blocking

ແຈ້ງເຕືອນໃຫ້ຜູ້ປົກຄອງຮັບຮູ້ສຳລັບການເຂົ້າເວັບໄຊຕ່າງໆຂອງເດັກ ແລະ ປິດເວັບໄຊທີ່ບໍ່ເໝາະສົມ ຫລື ທີ່ເປັນອັນຕະລາຍຕໍ່ເດັກ.



## 2.3 Monitoring Harmful SMS Text

ເມື່ອເດັກໄດ້ຮັບຂໍ້ຄວາມທີ່ບໍ່ເໝາະສົມ ຫລື ຄຳເວົ້າບໍ່ສຸພາບ ຊຶ່ງຂໍ້ຄວາມນັ້ນແມ່ນຖືກກຳນົດໄວ້ແລ້ວ ໂດຍຜູ້ປົກຄອງ ໂປຣແກຣມຈະລາຍງານໃຫ້ຜູ້ປົກຄອງຮັບຊາບ.

## 2.4 GPS Tracking

ມີລະບົບ GPS ນຳທາງ ແລະ ເຄືອຂ່າຍຂອງໂທລະສັບ ຜູ້ປົກຄອງສາມາດຕິດຕາມການເຄື່ອນໄຫວ ຂອງເດັກ ວ່າຢູ່ສະຖານທີ່ໃດ ໃນປັດຈຸບັນ.

## 2.5 Geo Fencing

ແຈ້ງເຕືອນໃຫ້ຜູ້ປົກຄອງຮັບຮູ້ ເມື່ອເດັກອອກນອກເຂດທີ່ກຳນົດໄວ້ ເຊັ່ນ: ໃນໂຮງຮຽນ ຫລື ເດັກເຂົ້າ ໄປເຂດອັນຕະລາຍເປັນຕົ້ນ.




## 2.6 Activity Report

ລາຍງານກ່ຽວກັບພຶດຕິກຳການໃຊ້ອຸປະກອນສະມາດໂຟນ ແລະ ໄລຍະເວລາການນຳໃຊ້ຂອງເດັກວ່າ ໜ້ອຍຫຼາຍປານໃດ, ທ່ານສາມາດຄົ້ນຫາພຶດຕິກຳ ແລະ ພັດທະນານິໄສ ການນຳໃຊ້ອຸປະກອນສະມາດໂຟນ ຂອງເດັກໄດ້.



### 2.7 Limiting Device Time

ຕັ້ງຄ່າກຳນົດເວລາສະເພາະໃນແຕ່ລະວັນ ເພື່ອປ້ອງກັນບໍ່ໃຫ້ເດັກຫລິ້ນສະມາດໂຟນເກີນເວລາ.




### 2.8 Device Function Blocking

ຜູ້ປົກຄອງສາມາດຕັ້ງຄ່າປິດຄຳສັ່ງໃນອຸປະກອນບາງຢ່າງເຊັ່ນ: ກ້ອງຖ່າຍຮູບ, ບຣູທູດ, ໄວຟາຍ, ໂທອອກ-ເຂົ້າ ແລະ ອື່ນໆ.

### 2.9 Remote Device Control

ຖ້າອຸປະກອນສະມາດໂຟນສູນຫາຍ ທ່ານສາມາດເຊື່ອມຕໍ່ໃນໄລຍະໄກ ແລະ ຄວບຄຸມອຸປະກອນນັ້ນໄດ້ ແລະ ທ່ານສາມາດໃຊ້ຄຳສັ່ງ ລັອກໜ້າຈໍ ຫລື ສັ່ງລຶບຂໍ້ມູນທັງໝົດອອກຈາກອຸປະກອນນັ້ນໄດ້.

### 2.10 Call Blocking

ຜູ້ປົກຄອງສາມາດປ້ອງກັນ ບໍ່ໃຫ້ໂທອອກລະຫວ່າງປະເທດ ທີ່ບໍ່ຮູ້ຈັກ ຫລື ບໍ່ເໝາະສົມ.

### 2.11 Tracking Lost Device

ຖ້າຫາກວ່າອຸປະກອນ ສະມາດໂຟນໄດ້ສູນຫາຍ, ຜູ້ປົກຄອງສາມາດໃຊ້ລະບົບ GPS ຫາສະຖານທີ່ໃນປັດຈຸບັນ ຂອງອຸປະກອນໄດ້ຢ່າງຖືກຕ້ອງ.

### 2.12 Transparently Sharing

ສົ່ງເສີມຄວາມໄວ້ວາງໃຈ ລະຫວ່າງຜູ້ປົກຄອງ ແລະ ເດັກ, ໃຫ້ຮັບຮູ້ເຖິງການກຳນົດ ແລະ ຈຳກັດຂອບເຂດການໃຊ້ອຸປະກອນສະມາດໂຟນ ຂອງຜູ້ປົກຄອງຕໍ່ເດັກ.

## 3. ໂປຣແກຣມ Mobile Fence ໃຊ້ໄດ້ກັບ ໂຮງຮຽນ ແລະ ບໍລິສັດບໍ?

ໂປຣແກຣມ Mobile Fence ເປັນ MDM (Mobile Device Management) ຊຶ່ງຊ່ວຍໃນການປ້ອງກັນ, ບໍລິຫານຈັດການ, ການເບິ່ງແຍງສຳລັບ ອຸປະກອນ ສະມາດໂຟນ, ບໍ່ແມ່ນແຕ່ໃຊ້ສຳລັບ ຜູ້ປົກຄອງຕໍ່ເດັກເທົ່ານັ້ນ ແຕ່ຍັງໃຊ້ໃນກຸ່ມບຸກຄົນ ທີ່ຕ້ອງການຄວບຄຸມ ແລະ ກຳນົດການໃຊ້ອຸປະກອນສະມາດໂຟນນຳອີກດ້ວຍ.

- **ສຳລັບ ສະຖາບັນການສຶກສາ ຫລື ໂຮງຮຽນ**

  ໃຊ້ບລັອກການເຂົ້າເຖິງ ເວັບໄຊທີ່ບໍ່ເໝາະສົມ ຫລື ເປັນອັນຕະລາຍ, ເກມ, ຢູທູບ, ແລະ ກຳນົດການໃຊ້ອຸປະກອນແທັບເລັດໃນໂຮງຮຽນ.

- **ສຳລັບ ບໍລິສັດ**

  ບລັອກໂປຣແກຣມ ທີ່ບໍ່ກ່ຽວຂ້ອງ ໃນບໍລິສັດ, ຖ້າອຸປະກອນສະມາດໂຟນສູນຫາຍ ທ່ານຍັງສາມາດເຊື່ອມຕໍ່ຫາອຸປະກອນໄດ້ໃນໄລຍະໄກ ແລະ ສາມາດລຶບຂໍ້ມູນໃນອຸປະກອນອອກ ເພື່ອປົກປ້ອງຂໍ້ມູນຂອງລູກຄ້າ ແລະ ຂໍ້ມູນພາຍໃນໄດ້.

## 4. ດາວໂຫຼດ ແລະ ຕິດຕັ້ງໂປຣແກຣມ

ໂປຣແກຣມ Mobile Fence ສາມາດດາວໂຫຼດໄດ້ທີ່ Google Play ສ່ວນຂັ້ນຕອນການຕິດຕັ້ງມີລາຍລະອຽດດັ່ງລຸ່ມນີ້:

4.1 ເຂົ້າ Google Play ແລ້ວຄົ້ນຫາຄຳວ່າ: Mobile Fence ຫລັງຈາກນັ້ນກົດ Install.

4.2 ເມື່ອຕິດຕັ້ງແລ້ວ ຕ້ອງລົງທະບຽນບັນຊີ ໃສ່ຊື່, ອີເມວ, ລະຫັດຜ່ານ.




4.3 ລັອກອິນ ບັນຊີ ທີ່ສ້າງສຳເລັດແລ້ວ (ຜ່ານຜູ້ປົກຄອງ)



4.4 ເຊື່ອມຕໍ່ອຸປະກອນສະມາດໂຟນ ເຂົ້າກັບລະບົບ Mobile Fence




4.5 ການຕິດຕັ້ງແມ່ນສຳເລັດສົມບູນ, ຜູ້ປົກຄອງ ສາມາດຕິດຕາມ ແລະ ກຳນົດການໃຊ້ ອຸປະກອນຂອງເດັກໄດ້ ຜ່ານທາງເວັບໄຊ http://www.mobilefence.com.

## 5. ລາຄາໂປຣແກຣມ

ໂປຣແກຣມ Mobile Fence ໄດ້ເປີດໃຫ້ທົດລອງໃຊ້ໃນໄລຍະເວລາ 30 ວັນ, ຫລັງຈາກນັ້ນແມ່ນຈະໄດ້ເກັບຄ່າບໍລິການເປັນລາຍປີ ຊຶ່ງມີຂໍ້ມູນລາຍລະອຽດດັ່ງນີ້:

### a) Basic plan

Family3

- Up to 3 devices can be linked
- Block harmful websites
- Block apps
- Limit usage time
- Track location
- Monitor online activities

*$ 28.8(USD)/ Year*

### b) Recommended plan

Family5

- Up to 5 devices can be linked
- Block harmful websites

- Block apps
- Limit usage time
- Track location
- Monitor online activities

$ *48*(USD)/ *Year*

c) **Link multiple devices**

Family10 Link multiple devices

- Up to 10 devices can be linked
- Block harmful websites
- Block apps
- Limit usage time
- Track location
- Monitor online activities

$ *96*(USD)/ *Year*